rfa | ວິທຍຸເອເຊັຽເສຣີ

# ຂໍໃຫ້ ຈ່າຍຄ່າຊົດເຊີຍ ໃນໂຄງການເຂື່ອນນໍ້າທາ 1

**ຈໍາປາທອງ**
2021.11.16



*ບ້ານຈັດສັນ ທີ່ສ້າງຂຶ້ນໃຫ້ຊາວບ້ານ ທີ່ຫຼີກທາງໃຫ້ໂຄງການກໍ່ສ້າງ ເຂື່ອນໄຟຟ້ານໍ້າທາ 1 ທີ່ແຂວງຫຼວງນໍ້າທາ ແລະ ແຂວງບໍ່ແກ້ວ, ວັນທີ 4 ທັນວາ 2019*

ສູນກາງແນວລາວສ້າງຊາດ ສເນີໃຫ້ສະພາແຫ່ງຊາດ ເພີ່ມທະວີກວດກາ ໂຄງການລົງທຶນຂອງຣັຖບານລາວ ເນື່ອງຈາກຫຼາຍໂຄງການໄດ້ສົ່ງຜົລກະທົບຕໍ່ຊາວບ້ານເປັນຈໍານວນຫຼາຍ ແຕ່ພັດບໍ່ໄດ້ຮັບການແກ້ໄຂໃຫ້ດີຂຶ້ນເທື່ອ.

ໂຕຢ່າງ ໂຄງການເຂື່ອນໄຟຟ້ານ້ຳທາ 1 ຂອງບໍຣິສັດຈີນ ຕັ້ງຢູ່ລະຫວ່າງ ແຂວງບໍ່ແກ້ວ ແລະແຂວງຫຼວງນ້ຳທາ ທີ່ຍັງບໍ່ທັນໄດ້ຈ່າຍຄ່າຊົດເຊີຍ ໃຫ້ກັບກັມມະກອນ ທີ່ເຮັດວຽກປຸກສ້າງເຮືອນຈັດສັນ, ການຈ່າຍຄ່າຊົດເຊີຍສິ່ງປຸກສ້າງ ແລະຊົດເຊີຍທີ່ດິນທຳການກະເສດ ໃຫ້ຊາວບ້ານທີ່ໄດ້ຮັບຜົລກະທົບ ກໍຍັງບໍ່ມີຄວາມຄືບໜ້າແຕ່ຢ່າງໃດ, ດັ່ງຍານາງຄຳຈັນ ພົມແສງສະຫວັນ ຮອງປະທານສູນກາງແນວລາວສ້າງຊາດ ໄດ້ມີຄວາມເຫັນຕໍ່ ກອງປະຊຸມສມັຍສາມັນ ເທື່ອທີ່ 2 ຂອງສະພາແຫ່ງຊາດ ຊຸດທີ່ 9 ເມື່ອວັນທີ່ 8 ພຶສຈິກາ ຜ່ານມານີ້ວ່າ:

*"ການຈ່າຍຄ່າແຮງງານໃຫ້ກັມມະກອນ ທີ່ອອກແຮງງານ ປຸກສ້າງທີ່ພັກອາສັຍ ຂອງໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳທາ 1 ຢູ່ເມືອງນາແລ ແຂວງຫຼວງນ້ຳທາ ແຕ່ປີ 2015 ຍັງບໍ່ທັນແກ້ໄຂໄດ້ ຮວມທັງຄ່າຊົດເຊີຍທີ່ດິນປຸກສ້າງ ແລະຈັດສັນທີ່ດິນການຜລິດຂອງປະຊາຊົນ."*

ສືບເນື່ອງຈາກປີ 2014-2015 ໂຄງການເຂື່ອນໄຟຟ້ານ້ຳທາ 1 ຂອງບໍຣິສັດຈີນ ໄດ້ຈ້າງບໍຣິສັດໂຊກໄຊ ແລະ ບໍຣິສັດແສງເພັດ ເປັນຜູ້ຮັບເໝົາກໍ່ສ້າງເຮືອນຈັດສັນ ແລະຫ້ອງການຕ່າງໆ ໃຫ້ກັບຊາວບ້ານທີ່ໄດ້ຮັບຜົລກະທົບທີ່ຕ້ອງໂຍກຍ້າຍ ໂດຍທາງບໍຣິສັດຜູ້ຮັບເໝົາ ກໍໄດ້ມີການຈ້າງຊາວບ້ານໃນພື້ນທີ່ ເປັນກັມມະກອນອອກແຮງງານ ປຸກສ້າງເຮືອນຈັດສັນແລະຫ້ອງການຕ່າງໆ ແຕ່ເມື່ອສຳເຣັດການກໍ່ສ້າງໄປແລ້ວ ກັມມະກອນເຫຼົ່ານັ້ນພັດບໍ່ໄດ້ຮັບເງິນຄ່າຈ້າງ ຮວມທັງໝົດເກືອບ 200 ລ້ານກີບ.

ຊາວບ້ານຜູ້ນຶ່ງ ທີ່ເປັນກັມມະກອນກໍ່ສ້າງສຸຂສາຣາ ນຳບໍຣິສັດແສງເພັດນັ້ນ ກໍກ່າວວ່າ ຕົນເອງຍັງລໍຖ້າຄ່າຈ້າງນັ້ນ ມາເປັນເວລາ 5 ປີປາຍແລ້ວ ຊຶ່ງເງິນທີ່ຕົນຕ້ອງໄດ້ຮັບແມ່ນ 3 ລ້ານກີບ ຈົນມາຮອດຕອນນີ້ ກໍຍັງບໍ່ມີທ່າທີວ່າ ຈະໄດ້ຮັບເງິນຄ່າຈ້າງດັ່ງກ່າວນັ້ນເທື່ອ ແລະບໍ່ເຫັນມີພາກສ່ວນໃດ ຈະຕິດຕາມກວດກາ ວ່າເງິນຄ່າຈ້າງທັງໝົດ ຕົກຢູ່ບ່ອນໃດ, ດັ່ງຊາວບ້ານຜູ້ນຶ່ງ ທີ່ໄປເປັນກັມມະກອນກໍ່ສ້າງສຸຂສາຣາ ກ່າວຕໍ່ວິທຍຸເອເຊັຽເສຣີ ໃນມື້ວັນທີ່ 16 ພຶສຈິກາ ນີ້ວ່າ:

*"ແມ່ນແຫຼະ ເຮົາກະບໍ່ໄດ້ຄືກັນ ເຮົາກະເຮັດຢູ່ ເຮັດສຸຂສາຣາໃຫ້ເຂົາ ກະບໍ່ໄດ້ເງິນ ເຂົາໜີປະໝົດ ໂອ້ຫຼາຍຄົນ ກັມມະກອນຫັ້ນ ນາຍຊ່າງກະບໍ່ໄດ້ເງິນ ເຂົາບໍ່ມາສົ່ງ ມາຮອດເທື່ອເງິນຫັ້ນ ຈັ່ງໃດກະຊິບໍ່ໃຫ້ ກະບໍ່ວ່າ ບໍ່ມາຫາກັນຈັກເທື່ອນ່າ."*

ຊາວບ້ານອີກຜູ້ນຶ່ງ ທີ່ໄປອອກແຮງງານ ນຳບໍຣິສັດ ຜູ້ຮັບເໝົາກໍ່ສ້າງ ກ່າວຕໍ່ວິທຍຸເອເຊັຽເສຣີ ໃນມື້ດຽວກັນນີ້ວ່າ ມີຊາວບ້ານໃນພື້ນທີ່ ໄປເປັນກັມມະກອນອອກແຮງງານ ປຸກສ້າງເຮືອນຈັດສັນ ແລະຫ້ອງການຕ່າງໆ ເປັນຈຳນວນຫຼາຍ 10 ຄົນ ບາງຄົນກໍໄດ້ຮັບເງິນຄ່າຈ້າງ ແຕ່ກໍໄດ້ແບບບໍ່ຄົບຈຳນວນ ແຕ່ສ່ວນຫຼາຍແລ້ວ ແມ່ນບໍ່ໄດ້ຮັບເງິນຄ່າຈ້າງ ມາຮອດປັດຈຸບັນ ກໍຍັງບໍ່ຮູ້ວ່າ ເງິນຄ່າຈ້າງທັງໝົດນັ້ນ ຕົກໄປຢູ່ບ່ອນໃດແທ້ ແລະກັມມະກອນ ຈະໄດ້ຮັບຄ່າຈ້າງນັ້ນ ຫຼືບໍ່ ຍັງບໍ່ຮູ້ເລີຍ:

*"ເຮັດຫຼາຍຢູ່ ບ້ານເຮົາເຮັດຫຼາຍຢູ່ ບາງຄົນກະໄດ້ ບາງຄົນກະບໍ່ໄດ້ ຍັງຕິດໜີ້ກັນໄປໆມາໆຫັ້ນແຫຼະ ຖາມຜູ້ນຶ່ງ ວ່າຍັງຢູ່ນຳຜູ້ນຶ່ງ ຖາມຫົວໜ້າຮັບເໝົາຫັ້ນ ວ່າຍັງຢູ່ນຳບໍຣິສັດ ຖາມບໍຣິສັດ ວ່າຈ່າຍແລ້ວ ແກ້ກັນໄປໆມາໆຢູ່ຫັ້ນລະ."*

ນອກຈາກນີ້ ພາຍຫຼັງທີ່ໂຄງການເຂື່ອນໄຟຟ້ານ້ຳທາ 1 ມີການຕັນນ້ຳເພື່ອຜລິດກະແສໄຟຟ້າ ກໍເຮັດໃຫ້ປະຣິມານນ້ຳໃນອ່າງໂຕ່ງນ້ຳເພີ່ມສູງຂຶ້ນ ຈົນໄປຖ້ວມດິນປຸກສ້າງ, ດິນໄຮ່, ດິນສວນ ຂອງຊາວບ້ານຈຳນວນນຶ່ງ ທີ່ຢູ່ບໍຣິເວນແຄມນ້ຳທາ ເຮັດໃຫ້ຊາວບ້ານ ບໍ່ສາມາດທຳການກະເສດໄດ້ ແລະຜ່ານມາ ຊາວບ້ານກໍໄດ້ຮຽກຮ້ອງ ຂໍເງິນຄ່າຊົດເຊີຍ ນຳໂຄງການເຂື່ອນໄຟຟ້ານ້ຳທາ 1 ແຕ່ຊາວບ້ານກໍບໍ່ໄດ້ຮັບຄວາມເປັນທັມ ແລະບໍ່ໄດ້ຮັບເງິນຊົດເຊີຍເທື່ອ, ດັ່ງຊາວບ້ານຜູ້ນຶ່ງ ທີ່ໄດ້ຮັບຜົລກະທົບ ໃນເມືອງນາແລ ແຂວງຫຼວງນ້ຳທາ ກ່າວຕໍ່ວິທຍຸເອເຊັຽເສຣີ ໃນມື້ດຽວກັນນີ້ວ່າ:

*"ເຂົາຕັນເຂື່ອນແລ້ວບາດນີ້ມັນຖ້ວມຂຶ້ນມາຕື່ມ ເຄື່ອງປູກຂອງຝັງຂອງປະຊາຊົນຫັ້ນນ່າ ເພາະວ່າຂະເຈົ້າມາເກັບຄັ້ງທຳອິດ ແລ້ວກະຄັ້ງທີ່ 2 ເປັນຄັ້ງທີ່ 3 ອຳນາດການປົກຄອງກະເຊັນໃຫ້ຮຽບຮ້ອຍແລ້ວ ດຽວນີ້ກະຍັງບໍ່ຍອມເທື່ອແຫຼະດຽວນີ້ ເກືອບໝົດບ້ານຫັ້ນແຫຼະ ເພາະວ່າມັນຂໍ້ມູນຕົກເຮັ້ຽເດ໋."*

ຊາວບ້ານອີກຜູ້ນຶ່ງ ທີ່ໄດ້ຮັບຜົລກະທົບຖືກໂຍກຍ້າຍ ແລະສູນເສັຽທີ່ດິນທຳການກະເສດ ກໍກ່າວວ່າ ນັບແຕ່ຖືກໂຍກຍ້າຍມາຢູ່ເຮືອນຈັດສັນໃໝ່ ເກືອບ 5 ປີນີ້ ກໍຂ້ອນຂ້າງຈະໃຊ້ຊີວິດລຳບາກ ແລະມີຄວາມຫຍຸ້ງຍາກຫຼາຍ ເພາະຊາວບ້ານ ບໍ່ມີທີ່ດິນທຳການກະເສດ ເພື່ອເຮັດອາຊີບທີ່ໝັ້ນຄົງ ເມື່ອທາງໂຄງການເຂື່ອນໄຟຟ້ານໍ້າທາ 1 ແລະທາງການລາວ ບໍ່ໄດ້ບຸກເບີກທີ່ດິນ ທຳການກະເສດທົດແທນໃຫ້ກັບຊາວບ້ານ ກໍເຮັດໃຫ້ຊາວບ້ານ ມີຄວາມຈຳເປັນ ຕ້ອງໄປຖາງປ່າເຮັດໄຮ່ເຮັດສວນ ແລະລ້ຽງສັດ ເພື່ອຄວາມຢູ່ລອດຂອງຊາວບ້ານ, ດັ່ງຊາວບ້ານຜູ້ນຶ່ງ ທີ່ໄດ້ຮັບຜົລກະທົບຖືກໂຍກຍ້າຍ ໃນເມືອງນາແລ ແຂວງຫຼວງນໍ້າທາ ກ່າວຕໍ່ວິທຍຸເອເຊັຽເສຣີ ໃນມື້ດຽວກັນນີ້ວ່າ:

*"ບໍ່ມີບ່ອນທຳການຜລິດ ບໍ່ມີທົ່ງໄຮ່ທົ່ງນາ ມີແຕ່ການຖາງປ່າເຮັດໄຮ່ ມີແຕ່ປູກເຂົ້າໄຮ່ຫັ້ນແຫຼະ ຊ່ວງນີ້ກະເຂົ້າປ່າຫັ້ນແຫຼະ ເປັນຈັ່ງໃດກະສເນີຊ່ວຍທາງປະຊາວບ້ານ ປະຊາຊົນຈັດສັນໃຫ້ເບິ່ງ."*

ກ່ຽວກັບບັນຫາດັ່ງກ່າວນີ້ ເຈົ້າໜ້າທີ່ຜແນກຊັພຍາກອນທັມມະຊາດ ແລະສິ່ງແວດລ້ອມ ເມືອງນາແລ ແຂວງຫຼວງນໍ້າທາ ກ່າວຕໍ່ວິທຍຸເອເຊັຽເສຣີ ໃນມື້ດຽວກັນນີ້ວ່າ ຊາວບ້ານທີ່ໄດ້ຮັບຜົລກະທົບ ຈາກໂຄງການເຂື່ອນດັ່ງກ່າວ ສ່ວນຫຼາຍຍັງບໍ່ມີດິນການກະເສດ ເພາະທາງການລາວບໍ່ໄດ້ບຸກເບີກໃຫ້ເທື່ອ ແລະຍັງບໍ່ມີແຜນຈະບຸກເບີກໃຫ້ຊາວບ້ານ.

ສ່ວນຄ່າຈ້າງ ຂອງກັມມະກອນຜູ້ອອກແຮງງານ ແລະເງິນຊົດເຊີຍຄ່າສິ່ງປຸກສ້າງ ແລະທີ່ດິນທຳການກະເສດທີ່ຖືກນໍ້າຖ້ວມ ຈາກການຕັນນໍ້າຂອງເຂື່ອນໄຟຟ້ານັ້ນ ກໍຍັງບໍ່ທັນເຫັນພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ໂຄງການເຂື່ອນໄຟຟ້ານໍ້າທາ 1, ທາງການເມືອງນາແລ ແລະທາງການແຂວງຫຼວງນໍ້າທາ ຫາລື ເຣື່ອງການຈ່າຍເງິນຊົດເຊີຍເທື່ອ:

*"ຈາກໂຄງການເຂື່ອນໄຟຟ້ານໍ້າທາ 1 ສ່ວນຫຼາຍກະຍັງບໍ່ທັນໄດ້ມີ (ທີ່ດິນການກະເສດ) ອັນນີ້ ໂຕນີ້ເພິ່ນຍັງບໍ່ທັນ ໄດ້ວ່າຫຍັງເທື່ອ ກໍດົນແຫຼະ."*

ນອກຈາກນີ້ ວິທຍຸເອເຊັຽເສຣີ ພຍາຍາມຕິດຕໍ່ໄປຍັງ ບໍຣິສັດ ເຂື່ອນໄຟຟ້ານໍ້າທາ 1 ແລະຜແນກພະລັງງານ ແລະບໍ່ແຮ່ ແຂວງຫຼວງນໍ້າທາ ເພື່ອສອບຖາມຣາຍລະອຽດ ແລະຄວາມຄືບໜ້າຂອງບັນຫາຕ່າງໆ ແຕ່ບໍ່ສາມາດຕິດຕໍ່ໄດ້.

ສຳລັບໂຄງການເຂື່ອນໄຟຟ້ານໍ້າທາ 1 ແມ່ນສົ່ງຜົລກະທົບຕໍ່ຊາວບ້ານ ທັງໝົດ 28 ບ້ານ ໃນເມືອງນາແລ ແຂວງຫຼວງນໍ້າທາ ແລະເມືອງຜາອຸດົມ ແຂວງບໍ່ແກ້ວ ໂດຍຊາວບ້ານທັງໝົດ ໄດ້ໂຍກຍ້າຍໄປຢູ່ບ້ານຈັດສັນໃໝ່ ຮວມ 11 ຈຸດ ເຊິ່ງແຕ່ຈຸດ ແມ່ນສ້າງຢູ່ເທິງພູສູງ ກະຈາຍຢູ່ຕາມແຄມນໍ້າທາ ໃກ້ກັບອ່າງໂຕ່ງນໍ້າ ຂອງ ເຂື່ອນໄຟຟ້ານໍ້າທາ 1.

ໂຄງການເຂື່ອນໄຟຟ້ານໍ້າທາ 1 ມີກຳລັງການຜລິດຂນາດ 186 ເມກາວັດ ຕັ້ງຢູ່ລະຫວ່າງ ແຂວງບໍ່ແກ້ວ ແລະແຂວງຫຼວງນໍ້າທາ ເຣີ່ມກໍ່ສ້າງມາແຕ່ປີ 2014 ແລະກໍ່ສ້າງສຳເຣັດ ໃນປີ 2018 ໂດຍ ບໍຣິສັດ China Southern Power Grid ເປັນຜູ້ລົງທຶນ ແລະຮັບເໝົາກໍ່ສ້າງ ມູນຄ່າ 450 ລ້ານໂດລາສະຫະຣັຖ.

ເຂື່ອນໄຟຟ້ານໍ້າທາ 1 ຖືກດຳເນີນການຂຶ້ນມາ ພາຍໃຕ້ກອບຄວາມຮ່ວມມື Belt & Road Initiative (BRI) ໂດຍໄຟຟ້າທີ່ຜລິດໄດ້ຈາກເຂື່ອນນໍ້າທາ 1 ຈະສົ່ງຂາຍໄປ ເຂດເສຖກິຈພິເສດສາມຫຼ່ຽມຄຳ ແຂວງບໍ່ແກ້ວ, ເຂດເສຖກິຈພິເສດບໍ່ເຕັນ ແຂວງ ຫຼວງນໍ້າທາ, ແຂວງທ່າຂີ້ເຫຼັກ ປະເທດພະມ້າ ແລະພາກໃຕ້ ຂອງມົນທົນຢູນນານ ປະເທດຈີນ ຊຶ່ງໄດ້ຮັບສັມ

ປະທານເປັນເວລາ 28 ປີ.